ດຣ. ທອງຄຳ ອ່ອນມະນີສອນ

ໄຂກະຈົ

# ລືມເຄົ້າ ເຜີດເຂັ້ມ

ສຳນັກພິມອັນນະສິນ

2004

ໂຣມກະວີ

# ຄິມເດັດຜັດເຄັມ

ໂດຍ:ດຣ ທອງຄໍາ ອ່ອນມະນີສອນ

ຈັດພິມໂດຍ

**ສໍານັກພິມ ວັນນະສິນ**

2004

# ໂຣມກະວີ "ຄົມເດັດ ເຜັດເຄັມ"

ໂດຍ: ດຣ ທອງຄຳ ອ່ອນມະນີສອນ

© ສະຫງວນລິຂະສິດ

***ຫົວໜ້າປັນນາທິການ***
ທອງໃບ ໂພທິສານ
***ຮອງປັນນາທິການ***
ໂອ້ທອງ ຄຳອິນຊູ
***ຜູ້ຊ່ວຍປັນນາທິການ***
ສິນສະຫວັນ ເຄື່ອງເທພາລິດ

***ອອກແບບປົກ***
BayPo Book Design

***ຄອມພິວເຕີ - ຈັດໜ້າ***
ທອງເດືອນ ທຳມະວົງ
ໄພວັນ ທຸມມາວົງ

***ຈັດພິມ***
ສຳນັກພິມ ວັນນະສິນ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

***ຈັດຈຳໜ່າຍ***
ນ. ພອນສະຫວັນ ໂພທິສານ
ຮ້ານຈຳໜ່າຍປຶ້ມ "ວັນນະສິນ"
(VANNASIN BOOKSHOP)
ຕັ້ງຢູ່ບໍລິເວນນ້ຳພຸ, ນະຄອນຫລວງວຽງຈັນ
ໂທລະສັບ: (020) 5418375

ພິມຄັ້ງທີ I ຈຳນວນ 1.000 ຫົວ
ຂະໜາດ 13 × 19 ຊມ
ທະບຽນພິມ: 103 ພຈ/31052004
ພິມທີ່ໂຮງພິມແຫ່ງລັດ

10 JUIL 2005

# ສາລະບານ

ໜ້າ

ຄຳນຳຂອງສຳນັກພິມ

1. ໃຈໃສ 1
2. ກຳມະກອນໃຫ້ແຮງ ແສງໄຟໃຫ້ທາງ 3
3. ດອກໄມ້ປ່ຽນສີ 6
4. ເອີຍທົວໃຈ 8
5. ຮູ້ເຂົາຮູ້ເຮົາ 11
6. ອາໄລເວລາ 14
7. ເມົາກາຍລືມແກ່ ເມົາແຕ່ຫລິ້ນລືມສ້າງຜົນງານ 18
8. ຄວາມຕາຍຂາຍຄວາມບໍ່ດີ 22
9. ຄົມເດັດເຜັດເຄັມ (ຄົນຄິດຄົນປະໝາດ) 25
10. ໂຈນສຳນຶກບາບ 28
11. ຕິດໄດ້ຕັດເປັນ 31
12. ມີທຸກຕ້ອງມີເຈັບ 34
13. ຄົມເດັດເຜັດເຄັມ (ລົ້ມຕ້ອງລຸກ) 37
14. ຄົມເດັດເຜັດເຄັມ (ຕ້ານຢາເສບຕິດ) 40
15. ເຜີ້ງໜີໄຟ 43

| | |
|---|---|
| 16. ບັງຄັບຄົນບັງຄັບໃຈ | 47 |
| 17. ເສື້ອສາຍດຽວ | 50 |
| 18. ເພື່ອຊີວິດວິວາຂອງຫລານ | 53 |
| 19. ຂໍເປັນ | 57 |
| 20. ປູກລູກປູກທີ່ໃຈ | 60 |
| 21. ເສຍຮັກຫນັກສະຫມອງ ຕ້ອງປົວທີ່ໃຈ | 63 |
| 22. ພໍ່ແມ່ສ້າງລູກ ຄົນປູກສ້າງດອກໄມ້ | 69 |
| 23. ເມັດເຫື່ອເພື່ອກະວີ | 72 |
| 24. ສຽງແຄນແຫ່ງຄວາມຮັກສອງຝັ່ງຂອງ | 75 |
| 25. ຍາມແລ້ວບຸນ | 78 |
| 26. ບໍ່ຍອມກົ້ມຫົວໃຫ້ຄວາມທຸກ | 81 |
| 27. ຈົ່ງຍິ້ມໃຫ້ກັບຄວາມຜິດຫວັງ | 84 |
| 28. ມີຊີວິດເພື່ອສ້າງ | 87 |
| 29. ຍາມຍິ້ມແລະຍາມຮ້ອງໄຫ້ | 90 |
| 30. ອະດີດດີຄວນຈໍາ ອະດີດດໍາຄວນກົ້ມ | 92 |
| 31. ເລືອດຄືຊີວິດ | 94 |
| 32. ບັນຫາພາສູ້ | 98 |
| ປະຫວັດຫຍໍ້ຂອງຜູ້ແຕ່ງ | 101 |

# ຄຳນຳ

ປຶ້ມທີ່ທ່ານກຳລັງອ່ານຢູ່ນີ້ ເປັນຫນຶ່ງໃນຈຳນວນປຶ້ມອ່ານ ວັນນະຄະດີ ທີ່ທາງສຳນັກພິມວັນນະສິນ ໄດ້ຈັດພິມຈຳຫນ່າຍ ເພື່ອສະເຫນີເຂົ້າແຂ່ງຂັນລາງວັນ "ສິນໄຊ" ລາງວັນວັນນະກຳສ້າງສັນດີເດັ່ນປະຈຳປີ ຂອງວາລະສານວັນນະສິນ. ລາງວັນນີ້ ມີຈຸດປະສົງເພື່ອຈະມອບໃຫ້ແກ່ນັກປະພັນ, ນັກກະວີຜູ້ມີຜົນງານທາງດ້ານການປະພັນວັນນະຄະດີທີ່ສ້າງສັນ ແລະ ດີເດັ່ນທຸກໆປີ ເຊິ່ງໃນປີ 2004 ນີ້ ຈະເລີ່ມແຂ່ງຂັນເປັນປີທຳອິດ ແລະ ຈະປະກາດຜົນ ມອບລາງວັນຢ່າງເປັນທາງການ ໃນວັນທີ 5 ພະຈິກ 2004 ເຊິ່ງຄ້ອມພໍດີກັບວັນສ້າງຕັ້ງວາລະສານວັນນະສິນຄົບຮອບ 25 ປີ.

ທ່ານຜູ້ອ່ານ ສາມາດສົ່ງແຮງໃຈໃຫ້ຄະແນນສະຫນັບສະຫນູນຜົນງານຂອງນັກປະພັນທີ່ທ່ານຊື່ນຊອບ ໂດຍການສົ່ງຄຳຄິດຄຳເຫັນຂອງທ່ານ ໄປຍັງສຳນັກພິມຂອງພວກເຮົາ ກ່ຽວກັບເນື້ອໃນ ແລະ ສິລະປະການປະພັນທີ່ໂດດເດັ່ນ ເປັນຄຸນຄ່າທາງດ້ານວັນນະກຳທີ່ສ້າງສັນ. ຄຳເຫັນຂອງທ່ານຜູ້ອ່ານ ແມ່ນຈະໄດ້ກຶກຮັບຮອງເປັນ

ຄະແນນປະກອບສ່ວນທີ່ສຳຄັນຍິ່ງໃຫ້ແກ່ການຕັດສິນລາງວັນ ຂອງຄະນະກຳມະການ.

ປຶ້ມວັນນະຄະດີທີ່ຈັດພິມຂຶ້ນໃນຊຸດນີ້ ລ້ວນແຕ່ໄດ້ຮັບການເລືອກສັນກັ່ນກອງມາຈາກນັກປະພັນ ແລະ ນັກກະວີຜູ້ມີຊື່ສຽງ ມີຜົນງານມາກມາຍ ໃນວົງການວັນນະກຳຂອງລາວເຮົາປັດຈຸບັນ. ດ້ວຍຄວາມຮັກ ຄວາມສັດທາ ແລະ ຄວາມມຸ່ງໝັ້ນ ທີ່ຢາກສ້າງສັນວົງການນັກປະພັນລາວ ໃຫ້ມີຄວາມກ້າວໜ້າຂະຫຍາຍຕົວ ແລະ ສົ່ງເສີມບົດບາດຂອງນັກຂຽນລາວ ໃຫ້ພົ້ນເດັ່ນໃນສັງຄົມຄືກັບນາໆປະເທດໃນໂລກ. ດັ່ງນັ້ນສຳນັກພິມວັນນະສິນຈຶ່ງໄດ້ ທຸ້ມເທແຮງກາຍແຮງໃຈ ເຫື່ອແຮງ ສະຕິປັນຍາ ແລະ ຄວາມສາມາດ ເຂົ້າໃສ່ການຈັດທຳ ແລະ ຈັດພິມປຶ້ມວັນນະຄະດີຊຸດນີ້ ອອກສູ່ສາຍຕາຜູ້ອ່ານ ແລະ ພວກເຮົາກໍຫວັງເປັນຢ່າງຍິ່ງວ່າ ຈະໄດ້ຮັບການສະໜັບສະໜູນ ແລະເປັນແຮງໃຈຈາກຜູ້ອ່ານທຸກໆທ່ານ ມານະທີ່ນີ້ດ້ວຍ.

***ທອງໃບ ໂພທິສານ***

*ຫົວໜ້າອຳນວຍການ ແລະ ບັນນາທິການ*

*ເລຂາທິການສະມາຄົມນັກປະພັນລາວ*

# ໃຈໃສ

❀ ໃຈບໍ່ໃສຕໍ່ຄອງ
ສຽງທີ່ມີໂທສະ
ໃຈບໍ່ແພງຂອງໃຊ້
ກຸ້ມຊະຍາຍຢູ່ຄ້າງ

ຊີຕີຫມ່ອງແສນທີ
ແສບຫູຫາກເຫັນແຈ້ງ
ໃນຄົວເປັນຕາຫນ່າຍ
ບໍ່ທັນລ້າງລູບສະບູ

❀ ເປັນຄູບໍ່ຮັກນ້ອງ
ບິດບຽງເບືອນເບົາເມີນ
ປະວາງ ຮອຍແຫງຮ້າວ
ມິດຢູ່ ຄືໂງ່ນເຝື້ອ

ນາມຊື່ຊຸມສິດ
ບໍ່ມັກສອນເສີມສ້າງ
ຮາວໃຈກໍຈາງຈືດ
ຝັນຄື້ມເຄັ່ງບໍ່ຄວນ ແທ້ໃດ

❀ ໃຈບໍ່ໃສຕໍ່ແກ້ວ
ແມ່ນຊີມີ ຄົນເຊີນ
ປັດປ່າຍໄປໄກກ້ຳ
ຟືດຟາດ ຕົກສິກກຸ້ມ

ແວວແວນວິງສີ
ຊ່ວຍແຍງເຍືອງໃກ້
ແດນດຳດິບມືດ
ໃຫ້ຕົມກິ້ງເກື່ອນກີບ

❀ ຄັນໃຈຝືນຝຶດຂ້ອງ ຂັດວາດເວທນີ
ມີໃຜມາຫມາຍເຕືອນ ຕື່ມຄໍາຄວາມນ້ອຍ
ມັກປ່ອຍຄວາມແຂງປ້ອຍ ປະຈານຄືນຄໍາຫຍາບ
ປາບໃຫ້ທົດທ່ຽວເຂົ້າ ຈົນຫລົງເວົ້າວ່າ " ມຶງ "

❀ ຈຶ່ງຂໍຝາກຂ່າວຂໍ້ ຄະຕິເກົ່າກອນສອນ
ຕອນເມື່ອຮຽນທໍາຕິ ທ່ານອາຈານສອນຊີ້
ມີຄ່າຄໍາຄົມແຫນ້ນ ຫນັກໃນໃສ່ສອງ
ລອງອ່ານດູພີ່ນ້ອງ ແລະ ລອງໃຊ້ແນ່ໃດ!

❀ ກອນນັ້ນ ຜູ້ກ່າວໄວ້ ເຊັ່ງຊື່ອາຈານໄພ ☆
ສິດບໍ່ຍອມລືມໄລ ຈື່ຈໍາຈົນໄດ້
ເພິ່ນວ່າ: " ໃຫ້ຄ່ອຍພິຈານໄຈ້ ໃນໃຈແຈ້ງແຈບ
ຈຶ່ງຄ່ອຍຄວາວຮູກຄົ້ນ ຜົນໄດ້ເຄື່ອງຄູນ

❀ ການບໍ່ຄຶດຕໍ່ຕັ້ງ ຊີ້ໂອ້ອາວພາຍຫລັງ
ມັນຈະເສຍຂອງຂວັນ ເຄື່ອງຄູນຄວນໄດ້ "
ສິ່ງສໍາຄັນ ໃນຂໍ້ ຄະຕິຄູສອນສັ່ງ ຕອນນີ້
ຕັ້ງແນ່ນໃຈສອງແຈ້ງ ຈຶ່ງແຍງຮູ້ເຫດການ ທ່ານເອີຍ.

---

☆ *ອາຈານມະຫາຄໍາໄພ*

# ກຳມະກອນໃຫ້ແຮງແສງໄຟໃຫ້ທາງ

❀ ແຜ່ນດິນບໍ່ເຍື່ອຍເຍ້
ເພາະເພື່ອປະກະພິທນາ
ພາຍຸ ມາຫມາຍໂຫຍ້ນ
ຟອງທະເລຍິ່ງຍູ້

ບໍ່ເພວາກເວີງກຸດ
ແກ່ນແຂງຂະຫນານກ້າ
ໂຍນຕຳຕີຍອງ
ຣາວພູຜັນແຜດຕັ້ງ
ບໍ່ຕີງເຕື້ອງເລື່ອງຕ່ອຍຕີ ດອກນາ

❀ ຫາດຊິເປັນຫາດໄດ້
ພູຊິເປັນພູສູງ
ດອນຊິເປັນດອນໄດ້
ເຕີມແຕ່ງແປງປ່ອນໃຫ້

ເພາະຊາຍກໍ່ກອງມະຫັນ
ກໍ່ເພາະຫີນຫລາຍກ້ອນ
ເພາະດິນມູນພູນເພີ່ມ
ຈຶ່ງນາມໄດ້ຊື່ວາດອນ

❀ ກຳມະກອນຕໍ່ຕັ້ງ
ສາມັກຄີເປັນດຽວ
ໄມ້ໃຫຍ່ຍາວຍືນຕົ້ນ
ຫີນຫມອກຝົນລື່ນລົ້ນ

ແຂງແກ່ນພະລັງເຫລັກ
ລຸກຍືນປືນກ້າວ
ຫີນຫນາວຫີນແດດ
ລຳຕົ້ນກໍ່ຈຶ່ງງາມ

❀ ໜ້າທີ່ອັນເລີດລ້ຳ
ຄືສອງແສງໃສເຮືອງ
ຄັນບໍ່ມີຄວາມຮ້ອນ
ໃຜຊິເອີເອີ່ຍຮ້ອງ

ຂອງຝ່າຍຕາເວັນແດງ
ຮຸ່ງຣິມພິມພື້ນ
ບໍ່ມີແສງໃສສ່ອງ
ຍໍຍ້ອງວ່າຕາເວັນ ເດນໍ

❀ ເຮືອຕ້ອງມີຜູ້ກ້າ
ແມ່ທັບນຳພາພົນ
ມີຜູ້ນຳພາເຕົ້າ
ມີເຮືອນຄັນຂາດຄົນຢູ່ເຝົ້າ

ພາແລ່ນແສນກະແສ
ຜາບມວນມານຮ້າຍ
ແຮງປະຊາໂຮມຮວມ
ເຈົ້າຂອງເມົາແຕຫລົ້ນ
ໂຈນຊິປົ້ນປອງປີນ ທັ້ນແລ້ວ

❀ ເພີ່ນວາ: ແຜນດິນອົມໂອບນ້ຳ
ໂຈມປ່າ ເທິງຝາມີ
ແບກດົງຫລວງລຳໄມ້
ຂຽວວິໄລຢູ່ຫມັ້ນ

ນະທີທ່າວັງປາ
ໃຫ້ແຜ່ພືຜືນກວ້າງ
ພົງໄພພະນາໃຫຍ່
ນິລັນໄວ້ຕະຫລອດການ

❀ ກັບໄຟລັນບໍ່ຂີດຕໍ່ໄຕ້
ມີແທ່ງທຽນ ດວງດຽວ
ໄຟບໍ່ເປັນແປວໃຫ້
ບາດວ່າມົວມືດມົ້ວ

ບໍ່ໃສສອງຊິງແສງ
ປ່ຽວບໍ່ເຮືອງໄກໄດ້
ແນມໄປກໍ່ບໍ່ທົວ
ມືດມິດມາທໍ່ທົ້ມ
ຮຸມເບື້ອງບອດທຸກທາງ

❀ ຄັນມີຫລາຍຜູ້ໄຕ້
ບີແບ່ງປັນໄປສຸມ
ເປັນເກົ່າກົມກະທນອມໄວ້
ທຽນຄູ່ນີ້ມອດມື້ວ
ໄຟຕໍ່ເປັນພັນ
ຈູດຟືນຂອນໂຄ້ນ
ຫລາຍເຮືອນຮັກສາຢູ່
ຍັງມີທຽນຫມື່ນເຫລັ້ມ
ຊີລຽນໄຕ້ຕໍ່ແສງ ແຫ້ນາ

❀ ອັນນີ້ ທ່ານປຽບໄດ້
ທ້ອນຮ່ວມໂຮມແຮງງານ
ຮ່ວມຫມູ່ຊົນຊາວເຊື້ອ
ທຸກເຫລົ່າກໍກອດແຫນ້ນ
ບໍ່ໂຄນຄຸງກັນກ້າວ
ສະເຫມີດັ່ງກໍາມະກອນ
ຊາດປະຊາຕອມຕຸ້ມ
ເຄືອລາວບັນດາເຜົ່າ
ແສນຊີເບືອຍາກຫຍຸ້ງ
ຫັນກ້າວຮ່ວມພະລັງ ຊອບແລ້ວ!

# ດອກໄມ້ປ່ຽນສີ

❀ ແຫວນຄຳ ເຄີຍສ່ອງແຈ້ງ
ສັງເລົ່າ ມີຮອຍແຫງ
ດາວເຄີຍ ໃສສັງມາເສົ້າ
ໃຈເຄີຍຈິງຈູບຈ້າວ

ແດງເປັ່ງປະກາຍສີ
ຮ່ານຮຽງຮອຍຮ້າວ
ເຫງົາມົວຫມອງຮູບ
ສັງເຫີຍຫ້າວຫຽວລົງ ນີ້ບໍ

❀ ວັດທະນະທຳທີ່ໄວ້
ໃສສ່ອງ ສຸດແສນງາມ
ໃຜເອົາຄວາມເປີເປື້ອນ
ໃຫ້ຄວາມໃສສ່ອງເຫລື້ອມ

ໃນກະອູບດວງໃຈ
ພັດເລົ່າຫມອງຫມາງໄຫມ້
ປອມແປງປັບໃສ່
ສະຫລົດເສົ້າເສື່ອມບໍ່ງາມ

❀ ແມ່ນ້ຳ ໃສສະອາດອ້າງ
ໃຜຊາງ ເອົາຕົມວາງ
ຫລືຝົນມົວເທເທັ້ງ
ທົບຟອງເຜືອນຟາດບໍ່ໄດ້

ພາງໆລົນໄຫລ
ຫວ່ານໃຫ້ວັງເວີນມົ້ວ
ເຕັງນະທີຈິ່ງຫມອງຫມົ່ນ
ເລີຍເຮໄຫ້ຮ່ຳໄຮ ຊັ້ນບໍ?

❀ ໄດ້ເປັນໂຫລະທັດແຈ້ງ ແສງສ່ອງສີໃສ
ສັງປ່ຽນໄປເປັນເຫລັກ ເສດບໍ່ມີຄົນຊື້
ຫລືຊ່າງ ເຊົາບໍ່ຊູນສ້ອມ ຊອມໃຈປາງປ່ວຍ
ຊວຍບາດເຮືອຊິຈອດຈ້ຳ ຈຳຈ້ຳຕະຫລິ່ງຊັນ ນີ້ນາ

❀ ວ່າທັນກຽວກັ່ນແຫນ້ນ ແສນແຈບຈິມຄັກ
ໄລຫລ່ອນ ຫັກຫາຍປຸດ ປ່ຽນບໍ່ທັນກົງຟື້ງ
ລົດເກົ່ງ ລົງລາຍຕັ້ງ ຕຳກະຕໍເຟືອນຟາດ
ຕິເຫລັກຂາດບໍ່ກ້າ ຫລືຫາຫ້ວງ ໂທດຜູ້ແປງ

❀ ຜ້າໄຫມແພງສະອາດແຈ້ງ ແຍງລະຍິບໄຍປະກາຍ
ສັງເລົ່າ ບາຍມາຣຸມ ທີ່ຂອງເຫມັນຮ້າຍ
ບໍທັນຂາຍຢາກຄຽງໃກ້ ແນມໄກງາມ ອອງຕອງ
ບາດລອງໄຂຂອດມ້ວນ ມາຍແກ້ກິ່ນສະເອືອນ

❀ ເຮືອນບໍ່ເຄີຍຄິດສ້າງ ຜັງກໍ່ບໍ່ທັນວາງ
ຍຸທ່າງ ເນົານອນສະບາຍ ງ່າຍຢູ່ຕຶກຫລັງກວ້າງ
ດວງຊະຕາ ລອຍຟ້າ ພະຍາແຖມແຖມຊ່ວຍ ບໍ່ວ່າຕິ!
ຫລືລວຍຍ້ອນ ເລກທ້າຍ ຂາຍຊື້ເຊື່ອງມື້ວານຫັ້ນບໍ?

# ເຂ່ຍຫົວໃຈ

❀ ກັບໄຟ ຄັນບໍ່ຂີດຕໍ່ໄຕ້ ບໍ່ໃສ່ສ່ອງຊີ້ງແສງ
ມີແທ່ງທຽນດວງດຽວ ປ່ຽວບໍ່ເຮືອງໄກໄດ້
ໄຟບໍ່ເປັນແປວໃຫ້ ແນມໄປເຫັນບໍ່ທົ່ວ
ບາດວ່າ ດັບມອດມົ້ວ ມົວມືດມາຫໍ່ຫຸ້ມ
ກຸມກົ້ວກໍ່າທຸກທາງ

❀ ຄັນມີຫລາຍຜູ້ໄຕ້ ໄຟຕໍ່ເປັນພັນ
ບິແບ່ງປັນໄປຕິດ ຕື່ມແສງສະຫງ່າງວນໄວ້
ໃສ່ສ່ອງເຮືອງກະຈະແຈ້ງ ພຽນແພງກະຫນອມຢູ່
ທຽນຄູ່ນີ້ ມອດມົ້ວ ຍັງມີທຽນຫມື່ນເຫລັ້ມ
ລຽນຕັ້ງຕື່ມພະລັງ

❀ ທຽນສະຫລະເລືອດເນື້ອ ໄຟເພື່ອພະລັງແສງ
ອຸທິດແຮງໂຮມລຸກ ເປ່ງແປວປະກາຍແຈ້ງ
ໄຟກິນທຽນທະລາຍຫ້ຽນ ກຸດລົງຍິເຍື່ອຍ
ນ້ຳຕາເຫືອຍເຣ່ຍຍ້ອຍ ເຖິງແມ່ນຕົນມັບມ້ອຍ
ຫມົດສ້ຽງກໍເພື່ອຄົນ ນີ້ແລ້ວ

❀ ຄົນຜູ້ເພິ່ນສະຫລາດນັ້ນ ທັນໂລກທັນສະໄໝ
ໄຫວພິບພໍພະລັງສູງ ບໍ່ເບິ່ງທຽນທະລາຍລ້າ
ຫາຫມູ່ທຽນມາໄຕ້ ວິໄລເຮືອງໄປຕະຫລອດ
ບໍ່ໃຫ້ເສຍຍອດເຊື້ອ ເຄືອເຫງົ້າຊື່ວ່າໄຟ

❀ ເພິ່ນວ່າ: ຂີ້ກະເດືອນຄວັດຄຸ້ຍ ດຸດດັ່ນດັນດິນ
ເຈາະຣອງຮູຮອຍເລິກ ລວງລົງພາຍພື້ນ
ເພື່ອເຮັດເຮືອນຮັງສ້າງ ສະຖານເນົານອນນັ່ງ
ອິ່ນອັ່ງຂີ້ຈະໂຫລກຕັ້ງ ໂພນນ້ອຍລາຊະວັງ

❀ ປວກກໍຍິ່ງຍອດຢັຽມ ພົງພວກພັນຂະຫຍັນ
ດຸຫມັ່ນສາມັກຄີຄຽນ ເຄັ່ງແຂງຂັນກ້າວ
ບໍ່ວ່າຫນາວ ຫລື ຮ້ອນ ລົມຈອນວອນແລ່ນ
ແຜ່ນດິນໄຫວຫວັ່ນມ້າງ ບໍ່ມີຫາງຢູ່ລ້າ ພາສ້າງພັດທະນາ

❀ ປວກຫົວຫລວງຍິ່ງກ້າ ເຊັ່ງຊາຊຸມສະກັນ
ເປັນຫມູ່ພົງພັນແສນ ແລ່ນລຽນລີລ້າຍ
ໃຜຜູ້ ຫລົງກາຍໃກ້ ຕີນໄວວາງຢຽບ
ກັດຈິບຄໍຂາດຄ້າງ ຄາຄັ້ນຄາບຢູ່ຕີນ ແທ້ໃດ.

❀ ແຕນກົ້ນກ່ານບໍ່ນ້ອຍ
ພົບສັດຕູ ຕຳເຕາະ
ບິນມ່າຍ ຫລາຍຂະບວນສູ້
ນ້ຳຕາຄົນຍັ່ງຍ້ອຍ

ບໍ່ກອຍທ່າລາຫລີບ
ຕ່ອຍຮັງຫວັງຮ້າຍ
ປະຈັນບານຕີຕ່ອຍ
ຫລີບແລ່ນກອຍກີບເວັ້ນ
ເປັນຮ້າຍນັບບໍ່ທົນ ແລ້ວເດີ

❀ ຊັ້ນຊື່ ຄົນຂະໜາດແທ້
ມີປັນຍາວິຊາການ
ແຄງບໍ່ຄາຄວາມຄ້ານ
ເປັນນຳພຽງບໍ່ເຕັມ

ຊິແປປຽບຝູງສັດ ບໍ່ເປັນຕີ
ອານໂລກາແຈ້ງ
ການງານຕ້ອງດີເດັ່ນ
ເປັນນຳເຄັມບໍ່ກ້ວມ
ຄວາມເວົ້າເປົ່າບໍ່ຈິງ

❀ ຈິງແຕ່ຫລັກຂອດຂໍ້
ທິດສະດີ ກຳນົດ
ມີແຕລົມບໍ່ມີນ້ຳ
ບໍ່ລົງມືເຮັດແທ້

ຍໍເກ່ງເກນກົດ
ເບັ່ງແບນຳຊີ້
ມີແຕຫາມບໍ່ມີທົ່ງ
ທິດສະດີປຽບແປ້
ແປປິ້ນປີ້ນບໍ່ດີ ຊັ້ນໃດ!

# ຮູ້ເຂົາຮູ້ເຮົາ

❀ ເພິ່ນວ່ານົກສະຫລາດນັ້ນ ຊອກວ່າງອຍຈັບ
ຈັ້ງຈ່ອງ ຈິງໃຈເກາະ ກອດຫຍັບຫຍຸມໄວ້
ຄົນດີໄວສະແຫວງສິ້ງ ຊອມແລເລັ້ງເລືອກ
ຫານາຍດີເພິ່ງໄດ້ ໄປຫນ້າຊີຮຸ່ງເຮືອງ

❀ ນາຍດຸນາຍດີ ລູກນ້ອງຍ້ອງ ຍໍຍື່ນສັນລະເສີນ
ນາຍບໍ່ດີໂລເລ ລ່ວງລວນເລງລ້ຽວ
ລູກນ້ອງ ຊັງຊອມເວັ້ນ ຫມາງເຫມັນແຫນງຫນ່າຍ
ຫມາຍຫ່າງໄກ ບໍ່ຢາກໃກ້ ໄຟໄຫມ້ໄລ່ລົນ

❀ ກົບຂຽດມັນມັກຫມົ້ນ ຫມົກຢູ່ໃນຮູ
ແດດວຸ່ ແຮງຮົມເຜົາ ເຊົ່າຊຶງເຊົາຮ້ອງ
ບາດວາ ຝົນຄະນອງຟ້າ ຮີຮາເຮືອນຮົ່ວ
ຂາຍຕົວ ໂອບເອບອົ້ງ ອຶ່ງອາງກໍອັ່ງເອົ້າ
ໃຫ້ເຂົາຂ້າຄຸບເອົາ ຫັ້ນແລ້ວ

❀ ເພິ່ນວ່າ ນົກໄສ່ຊ້າງ ລາງສົ່ງສັງທອນ
ທີ່ດ່ານດົງແດນຣົກ ຮື່ນຮົມເຮກ້ອງ
ປະປ່ອງ ໂກນກົກໄມ້ ໄຂຮັງໃຫ້ຄົນເບິ່ງ
ກາງຄືນ ພານຈອບຂຶ້ນ ເອົາດາງແຫງັບງຸ້ມ
ງຸມເຂົ້າປາກໂກນ

❀ ເອົາຄ້ອນໃຫຍ່ຂະຫນາບໂທຍ້ນ ໂຍນຕຶ່ງຕີກົກ
ນົກໄສ່ເສຍຂວັນລຸກ ຜູດຜະຫວາຫາລີ້
ຫນີໂກນ ໂຕນລົງຄ້າງ ດາງແຫເອົາຫລອກ
ອອກກໍອອກບໍ່ໄດ້ ມີທີ່ໃດໂຄດເຊື້ອ
ເຄືອເຫງົ້າກໍແມ່ນຕາຍ

❀ ສ່ວນວ່າກາສະຫລາດອ້າງ ເຮັດຮັງຢູ່ປາຍຍາງ
ຈິ່ມປິ່ມ ທາງເຫິງສູງ ລື່ນຊິແນແນມຊີ້
ມີຫມູ່ ພານຄະນານ້ອຍ ກືກະກຸນກີວຍ່າງ
ເຫັນປາຍຍາງຍື່ນຟ້າ ແຫງນຫນ້າເບິ່ງກໍວິນ ແລ້ວເດ

❀ ກາກໍຄຸຍກ໊າກກ້າ ຈາວ່າສຽງແຂງ
ແພງໄຂ່ຂາວເຕັມຮັງ ເວີ່ນວຽນລະວັງໄວ້
ແຫລວໃຫຍບາມແນວເຊື້ອ ບັກເສືອຊອມແລລ່ຳ
ກາດຳ ບິນຫາງແລ້ວ ແຫລວກໍຊິງຊູດຫຍ້ຳ
ນຳມ້ຽນມຸນບໍ່ຍັງ ແທ້ນາ

❀ ເມົາແຕ່ຄິດວ່າເຈົ້າ ຊານສະຫລາດເຫນືອເຂົາ
ເຂົາພັດເຫນືອເຮົາຄິດ ຄາດບໍ່ກອງເກິງໄດ້
ວ່າເຮົາຫລັກເຫລືອລົ້ນ ເກີນຄົນທັງໂລກ
ເຂົາພັດ ແຫລມສະຫລາດລ້ຳ ນຳບໍ່ທັນທໍ່ເສັ້ນ
ເອັນນ້ອຍນິກກະທາ

❀ ຮູ້ເຂົາ ເຫັນແຈບແຈ້ງ ແຍງສ່ອງສຸດສະຫມອງ
ໄຂປອງ ເຮົາຮຽນເລີກ ສະຫລາດເລັ່ງແລພໍ້
ຮູ້ສາດສິລະປະກວ້າງ ກວມດິນແດນໂລກ ກໍດາຍແລ້ວ
ບໍ່ຄວນໂອ້ອວາກກ້າ ວາຈາສູງຢູ່ຟ້າ
ສະເຫນີຫນ້າວ່າບໍ່ກົວ

❀ ຜ້າບໍ່ຝົນລັບເລື້ອຍ ມັນບໍ່ຄ່ອຍຄົມແຫລມ
ໃຊ້ຟັກຟັນແນວໃດ ໃສ່ຕຶງຕາງຕົ້ງ
ເສຍເຫື່ອແຮງຟັນລ້າ ລະອາເຊົາຈົນວາເຊົ່າ
ເມົາຟັກຟັນຊຸກໃຊ້ ຫາຍໃຈຫຸບຫອບທ້ອງ
ບໍ່ຄອງໄດ້ທ່ອນຟືນ ດອກນາ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ